# ກົມຄຸ້ມຄອງຊັບສິນຂອງລັດ
# ຫ້ອງການຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບຂອງ ສປປ ລາວ
# "ຫ້ອງການຈົດທະບຽນ"
## <u>ໜັງສືຕ້ອນຮັບ</u>

**<u>ເຖິງ:</u>** ລູກຄ້າຂອງຫ້ອງການຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບ ທຸກທ່ານທີ່ນັບຖື.

ພວກເຮົາມີຄວາມຍິນດີທີ່ໄດ້ສະໜອງຂໍ້ມູນໃຫ້ທ່ານດ້ວຍຮູບແບບຂໍ້ມູນຄົບຊຸດກ່ຽວກັບການບໍລິການຂອງຫ້ອງການຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບ ແລະ ບັນດາແບບຟອມທີ່ກຳນົດໄວ້ ທີ່ທ່ານຕ້ອງການໃນການສ້າງບັນຊີສຳລັບການບໍລິການ. ທຸກແບບຟອມຈະຕ້ອງໄດ້ປະກອບໃຫ້ສຳເລັດ, ເຊັນຊື່ ແລະ ສົ່ງກັບຄືນຫ້ອງການຈົດທະບຽນ 2 ສະບັບຕາມລະບຽບການສຳລັບທ່ານໃນການສ້າງບັນຊີກັບຫ້ອງການຈົດທະບຽນ ແລະ ເພື່ອເຂົ້າເຖິງການບໍລິການໃນປະຈຸບັນ ແລະ ໃນອະນາຄົດ. ຖ້າທ່ານມີຄຳຖາມໃດ ຫຼັງຈາກການທົບທວນເອກະສານທີ່ຄັດຕິດຄືນແລ້ວ, ກະລຸນາຕິດຕໍ່ຫາສູນບໍລິການລູກຄ້າຢູ່ທີ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.

ແບບຟອມຈະຕ້ອງປະກອບໃຫ້ສຳເລັດ, ເຊັນຊື່ ແລະ ສົ່ງກັບຄືນຫ້ອງການຈົດທະບຽນ 2 ສະບັບລວມມີ:

1. ໃບສະໝັກຂອງລູກຄ້າ;
2. ສັນຍາທາງດ້ານການເງິນ;
3. ເນື້ອໃນ ແລະ ເງື່ອນໄຂຂອງການນຳໃຊ້ລະບົບ;
4. ຮຽກຮ້ອງໃຫ້ມີການສະແດງບັດປະຈຳຕົວ ຫຼື ໃບຢັ້ງຢືນການຈົດທະບຽນທຸລະກິດໃນເວລາລົງທະບຽນສຳລັບການຢັ້ງຢືນ:
   - ຖ້າຫາກວ່າເປັນການລົງທະບຽນສ່ວນບຸກຄົນໃຫ້ສະແດງປະຈຳຕົວ ຫຼື ໜັງສືຜ່ານແດນ;
   - ຖ້າຫາກວ່າເປັນການລົງທະບຽນສຳລັບສະຖາບັນການເງິນໃຫ້ສະແດງໃບຢັ້ງຢືນການຈົດທະບຽນທຸລະກິດ.
5. ຄູ່ມືຂໍ້ມູນໃນການນຳໃຊ້;
6. ຊົ່ວໂມງຂອງການເຮັດວຽກ.

ຫຼັງຈາກສຳເລັດການປະກອບແບບຟອມ ແລະ ສົ່ງຂໍ້ຕົກລົງຂອງທ່ານຄືນພ້ອມກັບຈ່າຍເງິນຝາກເບື້ອງຕົ້ນຂອງທ່ານແລ້ວຫ້ອງການຈົດທະບຽນຈະສົ່ງຂໍ້ມູນຄຳແນະນຳລູກຄ້າໃຫ້ທ່ານ ແລະ ສະໜອງໃຫ້ທ່ານ

ແລະ ຜູ້ນໍາໃຊ້ຂອງທ່ານກັບທຸກສິ່ງທຸກຢ່າງທີ່ທ່ານຈໍາເປັນເພື່ອ ເລີ່ມຕົ້ນການດໍາເນີນງານກັບຫ້ອງການ ຈົດທະບຽນອອນໄລນ໌ໃໝ່ນີ້.

ຫາກທ່ານມີບັນຫາ ຫຼື ຕ້ອງການຄວາມຊ່ວຍເຫຼືອກ່ຽວກັບການບໍລິການຈົດທະບຽນ, ພະນັກງານຂອງຫ້ອງການຈົດທະບຽນແມ່ນປະຈໍາການແຕ່ວັນຈັນຫາວັນສຸກເວລາ 8:00 ໂມງເຊົ້າຫາເວລາ 12:00 ໂມງຕອນບ່າຍ ແລະ ເວລາ 1:00 ໂມງຕອນບ່າຍຫາເວລາ 4:00 ໂມງແລງ ຫຼື ໂດຍການໂທເບີຕິດຕໍ່ທີ່ໝາຍເລກ (856) 21 900 905.

ອີກຄັ້ງໜຶ່ງ, ຂໍຂອບໃຈທຸກທ່ານທີ່ມີຄວາມສົນໃຈໃນລະບົບຈົດທະບຽນອອນໄລນ໌ໃໝ່ນີ້ ແລະ ພວກເຮົາຫວັງວ່າຈະໄດ້ຮັບໃຊ້ທ່ານເປັນຢ່າງດີ.

ຫ້ອງການຈົດທະບຽນຄໍ້າປະກັນດ້ວຍສັງຫາລິມະຊັບ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.
ໂທລະສັບ/ແຟັກ: (856-21) 900905. ອີເມລ໌: reg_simp@mof.gov.la. ເວບໄຊຕ໌: www.mof.gov.la/str
Registry Office for Security Interests in Moveable Property. State Assets Management Department, Ministry of Finance.
Tel/Fax: (856-21) 900905. Email: reg_simp@mof.gov.la. Website: www.mof.gov.la/str